**ແຜນການສອນ:**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 13 ທັນວາ 2009 (12-13-2009)**

---

## ໃຫ້ໂລກຍິນດີ:

**ຂໍ້ພຣະຄັມພີໃນບົດຮຽນ:** (ລູກາ 1:46-55)

**ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:** ບົດຮຽນນີ້ເວົ້າກ່ຽວກັບນາງມາຣີອາໄດ້ສລອງການທີ່ພຣະເຢຊູໄດ້ຊົງໃຊ້ຊີວິດຂອງນາງແລະໃນຊີວິດຂອງຄົນອື່ນໆ ທີ່ພຣະເຈົ້າຊົງໃຊ້ໃນປວັດສາດ. ໃນທຳນອງດຽວກັນພຣະເຈົ້າໄດ້ກະທຳກິຈການຜ່ານຕົວຜູ້ຮັບໃຊ້ມາແລ້ວ ແລະພຣະອົງກໍຍັງໃຊ້ພວກເຮົາໃນທຸກວັນນີ້ຄືກັນ.

**ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ?:** ທ່ານສາມາດຄົ້ນພົບຄວາມຍິນດີໄດ້ດ້ວຍການເຂົ້າຮ່ວມໃນແຜນການຂອງພຣະເຈົ້າ ໃຫ້ມີຄວາມເຂົ້າໃຈ ແລະມີປະສົບການຮູ້ເຖິງວິທີທີ່ພຣະເຈົ້າໄດ້ທຳກິຈການຜ່ານຊີວິດຂອງທ່ານ.

**ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:**
ປະສົບການຂອງນນາງມາຣີອາໄດ້ບອກວ່າພຣະເຈົ້າໄດ້ຊົງກະທຳຢ່າງມະຫັສຈັນ. ພຣະອົງໄດ້ໃຊ້ຄົນທຳມະດາສາມັນຜູ້ທີ່ເຊື່ອຟັງພຣະອົງ ເພື່ອເຮັດໃຫ້ແຜນການອັນຍິ່ງໃຫຍ່ຂອງພຣະອົງໄດ້ສຳເຣັດ.

**ການຈັດຕຽມ ແລະແຜນການສອນຂອງຄຣູ:**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລົ້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**ແນະນຳ:** ຈັດນັກຮຽນເປັນສີ່ກຸ່ມ ແລະໃຫ້ແຕ່ລະກຸ່ມຄົ້ນຄວ້າຕາມຄຳຖາມດັ່ງລຸ່ມນີ້:

**(1)** ອະທິບາຍຄວາມຊື່ນຊົມອັນແທ້ຈິງຊຶ່ງບໍ່ແມ່ນຝົນດີໃຈພຽງຊົ່ວຄາວແນວໃດ? (2) ເປັນດ້ວຍເຫດໃດໃນຣະດູຄຣິສມັສປີນີ້ໆຈຶ່ງມີຜູ້ຂ້າຕົວຕາຍ ແລະມີຄວາມກົດດັນຫລາຍ? ຍ້ອນບໍ່ໄດ້ຂອງຂວັນບໍ?

**(3)** ແມ່ນຫຍັງທີ່ຄົນຂີ້ລັກມີຄວາມດີໃຈໃນຊີວິດຂອງພວກເຮົາ?

**(4)** ດ້ວຍເຫດຜົນອັນໃດພຣະຄຣິດພຣະບຸດຂອງພຣະເຈົ້າສະເດັດເຂົ້າມາໃນໂລກນຳເອົາຄວາມຊື່ຊົມຢ່າງມະຫາສານມາສູ່ພວກເຮົາໃນຣະດູນີ້?

ນຳພານັກຮຽນນະມັສການພຣະເຈົ້າໂດຍການຮ້ອງເພງ "ໃຫ້ໂລກຍິນດີ! ເພາະອົງພຣະຜູ້ເປັນເຈົ້າສະເດັດມາ"ຊຶ່ງສະແດງວ່າພຣະເຈົ້າຊົງຮັກ ທີ່ຊົງໄດ້ຍິນການສັຣເສີນພຣະນາມຂອງພຣະອົງຫລາຍເທື່ອກັບໄປກັບມາ.
ທ່ານຈະສເລີມສລອງກິຈການຂອງພຣະເຈົ້າໃນຊີວິດຂອງທ່ານແນວໃດ?

1. **<u>ພວກເຮົາພົບຄວາມມຍິນດີໃນເມື່ອພວກເຮົາຍອມວ່າພຣະເຢຊູເປັນພຣະເຈົ້າ:</u>** (ລູກາ 1:46-50)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ລູກາ 1:46-50
- ລູກາ 1:46-55 ເອີ້ນວ່າ "ເພງສັຣເສີນຂອງນາງມາຣີອາ" ຊຶ່ງແປມາຈາກພາສາລາຕິນຂອງພຣະທັມໃນຂໍ້ທີ 46" . ຈັບເອົາແວ່ນຂຍາຍຂຶ້ນມາ. ໃຫ້ນັກຮຽນຄິດເບິ່ງວ່າແວ່ນຂຍາຍນັ້ນມີຄວາມໝາຍແນວໃດ? ອ່ານພຣະທັມເພງສັຣເສີນ 34:1-5. ຂໍ້ທີ 5 ໄດ້ບອກເຖິງ ຜູ້ທີ່ເບິ່ງໃນພຣະອົງແມ່ນບໍ່?
- ໃນລູກາ 1:46-55 ອະທິບາຍເຣື່ອງຢູ່ທີ່ບ້ານຂອງເອລີຊາເບັດ ແລະເອລີຊາເບັດ, ຜູ້ທີ່ມີທ້ອງແລ້ວຫົກເດືອນກັບໂຢຮັນບັບຕິສໂຕ. ໃນເມື່ອນາງມາຣີອາໄດ້ເລົ່າເຣື່ອງ ສຽງເຂົ້າຫູຂອງເອລີຊາເບັດແລ້ວ ເດັກຜູ້ຢູ່ໃນທ້ອງຂອງເອລີຊາເບັດໄດ້ດີ້ນດ້ວຍຄວາມຍິນດີ (ລູກາ 1:44). ເປັນເພາະເຫດໃດໂຢຮັນບັບຕິສໂຕຈຶ່ງດີ້ນຂຶ້ນໃນທ້ອງຂອງເອລີຊາເບັດ?
- ໃຫ້ຜູ້ນຶ່ງອ່ານພຣະທັມ 1 ຊາມູເອນ 2:1-10. ແລ້ວປຽບທຽບເພື່ອໃຫ້ເຫັນຄວາມແຕກຕ່າງ ແລະປຽບທຽບຄວາມຄ້າຍຄືກັນຂອງເພງສັຣເສີນນາງຮັນນາໃສ່ກັບເພງສັຣເສີນຂອງນາງມາຣີອາ. ຂໍກຸນແຈຂອງຜູ້ຍິງທັງສອງໄດ້ເຕັມດ້ວຍຄວາມຊື່ນຊົມຍິນດີຂອງອົງພຣະຜູ້ເປັນເຈົ້າຫລາຍກວ່າການຈົດຈໍ່ທີ່ສະແດງອອກເຖິງຕົນເອງ. ໃນຂໍ້ທີ 45 ນາງມາຣີອາໄດ້ຮັບພຣະພອນໂດຍຄວາມເຊື່ອ.
- ດ້ວຍເຫດຜົນອັນໃດທີ່ນາງມາຣີອາໃຫ້ຄວາມຊື່ນຊົມຍິນດີໃນ ລູກາ 1:48?

**<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (ລູກາ 1:46-50)

1. ແມ່ນສັນຍາລັກຂອງພຣະເຈົ້າອັນໃດທີ່ທ່ານເຫັນໃນຊີວິດຂອງທ່ານ? ສັນຍາລັກອັນໃດທີ່ມີຄວາມໝາຍທີ່ສຸດສໍາລັບທ່ານ? ທ່ານຈະແຜ່ຜາຍເຣື່ອງຂອງພຣະເຈົ້າໃຫ້ຄົນອື່ນເຫັນໃນຊີວິດຂອງທ່ານແນວໃດ?
2. ພຣະເຈົ້າໄດ້ຊົງເຮັດສິ່ງໃດສໍາເຣັດໃນຊີວິດຂອງທ່ານ? ເປັນຫຍັງພຣະເຈົ້າເລືອກທີ່ອວຍພອນນາງມາຣີອາ? ແລ້ວເປັນຫຍັງພຣະເຈົ້າຈະບໍ່ອວຍພອນພວກເຮົາເຊັ່ນກັນ?
3. ທ່ານຄິດວ່ານາງມາຣີອາໄດ້ມອບກາຍຖວາຍຕົວໃຫ້ພຣະເຈົ້າຫລາຍປານໃດພຣະເຈົ້າຈຶ່ງມີພຣະປະສົງໃນຊີວິດຂອງລາວ? ແລ້ວໃນຊີວິດຂອງທ່ານເດ?
4. ແຜນການຂອງທ່ານຖືກຢຸດສະງັກໄປທ່ານຈະຕອບສນອງແນວໃດ?

2. **<u>ພວກເຮົາພົບຄວາມຍິນດີໃນວິທີພຣະເຈົ້າທໍາພາຣະກິຈ:</u>** (ລູກາ 1:51-53)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ລູກາ 1:51-53
- ນາງມາຣີອາບໍ່ໄດ້ຮຽກຮ້ອງໃຫ້ມາສົນໃຈລາວ, ແຕ່ໃຫ້ມາສົນໃຈໃນການຄຸ້ມຄອງອັນຊົງຣິດຂອງພຣະເຈົ້າ. ໃຫ້ຍົກສິ່ງທີ່ມີນໍ້າໜັກ 3 ປອນເພື່ອສະແດງໃຫ້ເຫັນຄວາມແຂງແຮງແຂນຂອງທ່ານ (ຫລືໃຫ້ນັກຮຽນສອງຄົນປໍ້າແຂນກັນ ໂດຍເອົາສອກຕັ້ງເທິງໂຕະ) ຊຶ່ງຈະເຫັນໄດ້ວ່າຈະມີແຂນຂອງຜູ້ນຶ່ງແຂງແຮງກວ່າແລະກໍໄດ້ຊັຍຊະນະ. ເອົາພຣະທັມເພງສັຣເສີນ 89:13 ປຽບທຽບກັບແຂນຂອງນັກມວຍປໍ້າວ່າມີແຂນໃດແດ່ທີ່ເທົ່າທຽມໄດ້.
- ເປັນຫຍັງພຣະເຈົ້າຈຶ່ງຍົກສູງຜູ້ຕໍ່າຕ້ອຍຊຶ່ງອີງຕາມພຣະທັມ 1 ໂກຣິນໂທ 1:26-31? ໃນປຶ້ມແປພຣະຄັມພີບອກເຖິງວິທີທາງຂອງພຣະເຈົ້າວ່າແນວໃດ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** ລູກາ 1:51-53

1. ພລັງອຳນາດຂອງພຣະເຈົ້າມີຢູ່ໃນຊີວິດທ່ານຫລາຍປານໃດ? ພຣະເຈົ້າທຳງານໂດຍພລັງອັນຍິ່ງໃຫຍ່ຂອງພຣະອົງໃນຊີວິດຂອງທ່ານແນວໃດແດ່?
2. ທ່ານໄດ້ເຊື່ອວ່າພຣະເຈົ້າສາມາດທຳການສຳເຣັດຕາມພຣະປະສົງຂອງພຣະອົງຜ່ານທາງທ່ານໄດ້ບໍ່?
3. ພຣະເຈົ້າໄດ້ຊົງຍົກທ່ານຈາກທີ່ຕ່ຳຕ້ອຍຂຶ້ນມາທີ່ສູງຢູ່ບໍ່? ຖ້າມີ ຈົ່ງອະທິບາຍເບິ່ງ?
4. ສິ່ງທີ່ດີນັ້ນ ແມ່ນຫຍັງທີ່ພຣະເຈົ້າຊົງພໍພຣະທັຍໃນຫົວໃຈຂອງທ່ານ?
5. ສິ່ງທີ່ດີເຫລົ່ານີ້ໄດ້ນຳຄວາມຊື່ນຊົມຍິນດີມາສູ່ທ່ານແນວໃດ?

3 . **ພວກເຮົາຍິນດີໃນພຣະເຈົ້າຜູ້ເພິ່ງພາໄດ້:** (ລູກາ 1:54-55)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ລູກາ 1:54-55
- ອ່ານພຣະທັມ ໂຢຮັນ 3:16 ໂດຍມີຄວາມສຳຄັນວ່າແມ່ນຫຍັງທີ່ພຣະເຈົ້າຊົງຮັກ.
- ໃຫ້ອ່ານຂໍ້ 5 ອີເທື່ອນຶ່ງ ບອກກັບນັກຮຽນວ່າ ພຣະເຈົ້າບໍ່ໄດ້ລືມ ຫລືປ່ຽນແປງ ເຊັ່ນພຣະອົງໄດ້ຊົງໃຫ້ຄຳໝັ້ນສັນຍາແກ່ຊົນຊາດອິສຣາເອນ. ຢ່າເສັຽໃຈໃນການລໍຄອຍເພື່ອໃຫ້ພຣະເຈົ້າເພີ້ມພຣະຄຳສັນຍາຂອງພຣະອົງໃນຊີວິດຂອງທ່ານ.
- ເປັນຫຍັງການລໍຖ້າຄືວ່າຫຍຸ້ງຍາກແທ້?
- ການທີ່ພຣະອົງໃຫ້ສັນຍາຂອງພຣະອົງສຳເຣັດນັ້ນບາງເທື່ອກໍໃຊ້ເວລາເຖິງປີນຶ່ງ. ພຣະເຈົ້າບໍ່ໄດ້ຊົງຊັກຊ້າເວລາ; ຄວາມສຳເຣັດຂອງພຣະອົງເປັນແຜນການທີ່ດີທີ່ສຸດສຳລັບຊີວິດຂອງພວກເຮົາ (ຟີລິບປອຍ 2:13)
- ອ່ານລູກາ 1:55. ເຮັດແນວໃດນາງມາຣີອາມີຄວາມໄວ້ວາງໃຈໃນພຣະເຈົ້າຢ່າງສຸດຈິດສຸດໃຈຕລອດໄປໄດ້. ຄຳສັນຍາທີ່ພຣະອົງໄດຊົງໃຫ້ແກ່ອັບຣາຮາມ ແລະພົງພັນຂອງລາວເຊັ່ນດຽວກັນ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** ລູກາ 1:54-55

1. ທ່ານໄດ້ມີຄວາມຍິນດີຕັ້ງແຕ່ພວກເຮົາໄດ້ຍິນການປະກາດວ່າພຣະຜູ້ໂຜດໃຫ້ພົ້ນເຂົ້າມາໃນໂລກ ໃຫ້ສະແດງຄວາມຍິນດີຂອງພຣະອົງແຜ່ອອກໄປທົ່ວໂລກໄດ້ແນວໃດ?
2. ພຣະເຈົ້າໄດ້ຊົງເຮັດໃຫ້ທ່ານລໍຄອຍພຣະອົງບໍ່? ທ່ານໄດ້ຮຽນຫຍັງແດ່ຈາກຫ້ອງລໍຄອຍພຣະອົງ?
3. ຄຳສັນຍາທີ່ດີຂອງພຣະເຈົ້າທີ່ທ່ານໄດ້ເດີນຕາມແຕ່ລະວັນນັ້ນແມ່ນອັນໃດແດ່? ການປະຕິບັດຂອງທ່ານທີ່ຕ້ອງການໃຫ້ຄວາມເຊື່ອຄວາມໄວ້ວາງໃຈຂອງທ່ານໃຫ້ເຂັ້ມແຂງຂຶ້ນນັ້ນມີອັນໃດແດ່?
4. ທ່ານຈະໄດ້ຄວາມຊື່ນຊົມຍິນດີທີ່ພຣະເຈົ້າຊົງພໍພຣະທັຍໃນການສະແດງອອກຂອງທ່ານແນວໃດ?

**ພຣະຄັມພີແຫ່ງຄວາມຈິງ**

- ບັນດາຜູ້ທີ່ເຊື່ອຜູ້ທີ່ໄດ້ພົບກັບຄວາມຍິນດີຢ່າງເລິກຊຶ້ງ, ໄດ້ຕັ້ງຄວາມເຊື່ອໝັ້ນຢ່າງໝັ້ນທານໃນພຣະຄຸນຂອງພຣະເຈົ້າ ຮູ້ຈັກວ່າພຣະອົງເປັນຜູ້ປະເສີດໂດຍພຣະຄຳ ແລະແບບຢ່າງຊີວິດຂອງພຣະອົງ.
- ຜ່ານການຍ້ອງຍໍສັຣເສີນ, ຄຣິສຕຽນຈະໄດ້ຮັບຄວາມຊື່ນຊົມຍິນດີທີ່ພຣະເຈົ້າຊົງປະທານໃຫ້.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**